ຄະນະກຳມະການຄຸ້ມຄອງຫຼັກຊັບ

Lao Securities Commission

# ບົດລາຍງານປະຈຳປີ 2014

# Annual Report 2014



# ຄຳນຳ

"ບົດລາຍງານປະຈຳປີ 2014" ຖືເປັນບົດລາຍງານປະຈຳປີ ສະບັບທີ 3 ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ. ຂ້າພະເຈົ້າມີຄວາມພາກພູມໃຈ ແລະ ເຊື່ອໝັ້ນວ່າ "ບົດລາຍງານປະຈຳປີ 2014" ຂອງພວກເຮົາຈະສະ ໜອງຂໍ້ມູນທີ່ສຳຄັນໃຫ້ແກ່ສັງຄົມໄດ້ຮັບຊາບກ່ຽວກັບວຽກງານຫຼັກຊັບຂອງ ສປປ ລາວ ໃນໄລຍະໜຶ່ງປີຜ່ານມາ.

ປີ 2014 ເປັນອີກປີໜຶ່ງທີ່ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ເອົາໃຈໃສ່ ແລະ ສຸມທຸກສະຕິປັນ ຍາເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບໃຫ້ມີການເຄື່ອນໄຫວຢ່າງມີປະສິດທິພາບ, ມີຄວາມໂປ່ງໃສ ແລະ ຍຸຕິທຳ, ຊຶ່ງພວກເຮົາໄດ້ສຳເລັດການສ້າງ ແລະ ປັບປຸງນິຕິກຳກ່ຽວກັບວຽກງານຫຼັກຊັບ ຈຳນວນ 9 ສະບັບ, ອະນຸຍາດໃຫ້ 1 ບໍລິສັດ ອອກຈຳໜ່າຍຮຸ້ນຄັ້ງທຳອິດ (Initial Public Offering: IPO) ເພື່ອລະດົມທຶນຈາກມວນຊົນ, ອະນຸຍາດໃຫ້ຕະຫຼາດຫຼັກຊັບລາວ ປ່ຽນຈາກການຈັບຄູ່ຊື້-ຂາຍ ຈາກ 6 ຄັ້ງ/ວັນ ມາເປັນການຈັບຄູ່ແບບຕໍ່ເນື່ອງ (ວິນາທີ ຕໍ່ ວິນາທີ) ແລະ ກຳນົດຂອບເຂດການເໜັງຕີງຂອງລາຄາຮຸ້ນໃນແຕ່ລະວັນ ຈາກ ± 5% ເປັນ ± 10% ທຽບກັບລາຄາປິດມື້ຜ່ານມາ ແລະ ອອກໃບຮັບຮອງການເຄື່ອນໄຫວເປັນທະນາຄານດູແລຊັບສິນໃຫ້ແກ່ທະນາຄານທຸລະກິດໜຶ່ງແຫ່ງ ພ້ອມນັ້ນ ເພື່ອເປັນການເຜີຍແຜ່ວຽກງານຫຼັກຊັບໃຫ້ມວນຊົນໃນສັງຄົມໄດ້ມີຄວາມຮັບຮູ້ ແລະ ເຂົ້າໃຈ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຍັງໄດ້ເອົາໃຈໃສ່ໃນການຈັດຕັ້ງກອງປະຊຸມສຳມະນາ ແລະ ໂຄສະນາເຜີຍແຜ່ວຽກງານຫຼັກຊັບຢ່າງສະໜ່ຳສະເໝີ. ນອກນັ້ນ, ເພື່ອເປັນການສືບຕໍ່ຈັດຕັ້ງປະຕິບັດແນວທາງນະໂຍບາຍການຕ່າງປະເທດຂອງ ພັກ ແລະ ລັດ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ເສີມຂະຫຍາຍການພົວພັນຮ່ວມມືກັບສາກົນ ພາຍໃຕ້ຮູບການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ກັບ ຄະນະກຳມະການຄຸ້ມຄອງຫຼັກຊັບຂອງບັນດາປະເທດໃນພາກພື້ນ ກໍ່ຄື ອົງການຈັດຕັ້ງສາກົນຕ່າງໆຢ່າງເປັນປົກກະຕິ ເພື່ອເຮັດໃຫ້ວຽກງານຄຸ້ມຄອງຫຼັກຊັບ ກໍ່ຄື ວຽກງານຄຸ້ມຄອງຕະຫຼາດທຶນ ຂອງ ສປປ ລາວ ມີການພັດທະນາຢ່າງຕໍ່ເນື່ອງ ແລະ ຍືນຍົງ ໃນປີ 2014 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ສຳເລັດການສ້າງແຜນຍຸດທະສາດການພັດທະນາຕະຫຼາດທຶນ 2016-2025 ແລະ ວິໄສທັດຮອດປີ 2030.

ສຳລັບທິດທາງແຜນການປີ 2015 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະໄດ້ຍົກສູງບົດບາດການຄຸ້ມຄອງມະຫາພາກດ້ານວຽກງານຫຼັກຊັບໃຫ້ມີຈຸດສຸມກວ່າເກົ່າດ້ວຍການເລັ່ງສ້າງ ແລະ ປັບປຸງນິຕິກຳເພີ່ມຕື່ມຈຳນວນໜຶ່ງ ເພື່ອຮັບປະກັນການຄຸ້ມຄອງຄວາມໝັ້ນຄົງຂອງຕະຫຼາດຫຼັກຊັບລາວ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດ ຊຸກຍູ້ໃຫ້ບໍລິສັດທີ່ມີເງື່ອນໄຂເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວໃຫ້ຫຼາຍຂຶ້ນ, ສ້າງເງື່ອນໄຂໃຫ້ບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຂອງຕ່າງປະເທດສາມາດເຂົ້າມາໃຫ້ບໍລິການຢູ່ ສປປ ລາວ, ເພີ່ມທະວີການເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຫຼັກຊັບໃຫ້ແກ່ສັງຄົມດ້ວຍຫຼາກຫຼາຍວິທີ, ສ້າງສາຍພົວພັນຢ່າງໝັ້ນຄົງກັບອົງການຈັດຕັ້ງສາກົນ ແລະ **ຄະນະກຳມະການຄຸ້ມຄອງຫຼັກຊັບ** ປະເທດຕ່າງໆ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ ແລະ ກະກຽມການເຂົ້າເປັນສະມາຊິກຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO), ພ້ອມທັງ ກະກຽມຄວາມພ້ອມໃນການເປັນເຈົ້າພາບຈັດກອງປະຊຸມການຮ່ວມມືດ້ານຕະຫຼາດທຶນຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ 5 ປະເທດເຂດອ່າງແມ່ນ້ຳຂອງ (MCMC) ຄັ້ງທີ V.

**ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

**ວັດທະນາ ດາລາລອຍ**

# ສາລະບານ


I. ອົງການຄຸ້ມຄອງວຽກງານຫຼັກຊັບ ........ 1

1. ຄະນະກຳມະການຄຸ້ມຄອງຫຼັກຊັບ ........ 1

2. ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ........ 2

II. ຄວາມເຂົ້າໃຈພື້ນຖານກ່ຽວກັບວຽກງານຫຼັກຊັບ ........ 4

III. ສະພາບການເຄື່ອນໄຫວວຽກງານຫຼັກຊັບ ໃນປີ 2014 ........ 5

1. ສະພາບລວມຂອງຕະຫຼາດຫຼັກຊັບ ຢູ່ ຕ່າງປະເທດ ........ 5

2. ສະພາບລວມຂອງຕະຫຼາດຫຼັກຊັບລາວ ........ 6

2.1. ການລະດົມທຶນດ້ວຍການອອກຈຳໜ່າຍຫຼັກຊັບ ........ 6

2.2. ການເຄື່ອນໄຫວຂອງບໍລິສັດຈົດທະບຽນ ........ 7

2.3. ການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ ........ 7

2.4. ສະຖາບັນສີກາງດ້ານຫຼັກຊັບ ........ 11

2.5. ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ........ 13

2.6. ການຮ່ວມມືສາກົນ ........ 13

IV. ທິດທາງແຜນການປີ 2015 ........ 14

## I. ອົງການຄຸ້ມຄອງວຽກງານຫຼັກຊັບ

### 1. ຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ ມີຊື່ຫຍໍ້ວ່າ: “ຄຄຊ” ແມ່ນການຈັດຕັ້ງໜຶ່ງຂອງລັດຖະບານ ມີສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີຊື່ຫຍໍ້ວ່າ: “ສຄຄຊ” ເປັນກົງຈັກຊ່ວຍວຽກ.

ຄຄຊ ເປັນອົງການຄຸ້ມຄອງວຽກງານຫຼັກຊັບ ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ກັບລັດຖະບານ ໃນການຄຸ້ມຄອງມະຫາພາກທາງດ້ານວຽກງານຫຼັກຊັບ ຢ່າງລວມສູນໃນຂອບເຂດດິນແດນຂອງ ສປປ ລາວ ເປັນຕົ້ນແມ່ນການຄຸ້ມຄອງ, ຕິດຕາມ ແລະ ກວດກາວຽກງານຫຼັກຊັບ ໃຫ້ມີປະສິດທິພາບ, ແນໃສ່ເຮັດໃຫ້ການລະດົມທຶນ ແລະ ການພັດທະນາຕະຫຼາດຫຼັກຊັບ ມີການເຄື່ອນໄຫວຢ່າງຕໍ່ເນື່ອງ ແລະ ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

ຄຄຊ ມີສິດ ແລະ ໜ້າທີ່ ໃນການພິຈາລະນາການສ້າງ, ການປັບປຸງ ແຜນຍຸດທະສາດ, ນະໂຍບາຍ ແລະ ກົດໝາຍທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ຕາມການສະເໜີຂອງ ສຄຄຊ ເພື່ອນຳສະເໜີລັດຖະບານພິຈາລະນາ; ຮັບຮອງແຜນງານ-ໂຄງການ, ແຜນການເຄື່ອນໄຫວ, ແຜນການປະກອບ-ກໍ່ສ້າງບຸກຄະລາກອນ ແລະ ແຜນງົບປະມານ ລວມທັງ ແຜນການກໍ່ສ້າງພື້ນຖານໂຄງລ່າງ ແລະ ປະກອບອຸປະກອນເຕັກນິກ ຂອງ ສຄຄຊ; ຮັບຮອງເອົາລະບຽບການກ່ຽວກັບວຽກງານຫຼັກຊັບ ຕາມການສະເໜີຂອງ ສຄຄຊ; ຮັບຮອງເອົາການອະນຸຍາດ ສ້າງຕັ້ງ ຫຼື ຍຸບເລີກ ສະຖາບັນສື່ກາງດ້ານຫຼັກຊັບ, ການອອກຈຳໜ່າຍຫຼັກຊັບ ຕາມການສະເໜີ ຂອງ ສຄຄຊ; ຄົ້ນຄ້ວາ ການສ້າງຕັ້ງ ແລະ ຍຸບເລີກ ຕະຫຼາດຫຼັກຊັບ ຕາມການສະເໜີຂອງ ສຄຄຊ ເພື່ອນຳສະເໜີລັດຖະບານພິຈາລະນາ; ຊີ້ນຳ-ນຳພາ ສຄຄຊ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ ໃນການໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ທາງດ້ານວຽກງານຫຼັກຊັບ, ການພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອແລກປ່ຽນຂໍ້ມູນຂ່າວສານທາງດ້ານຫຼັກຊັບ ແລະ ຍາດແຍ່ງການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ; ຊຸກຍູ້ ແລະ ປຸກລະດົມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນພັດທະນາວຽກງານຫຼັກຊັບ ໂດຍສະເພາະແມ່ນການຊຸກຍູ້ບໍລິສັດຈາກທຸກຂະແໜງການທຸລະກິດ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ; ສະຫຼຸບ ແລະ ລາຍງານການເຄື່ອນໄຫວຂອງຕົນ ຕໍ່ ລັດຖະບານຢ່າງເປັນປົກກະຕິ.

ມາຮອດທ້າຍປີ 2014 ໂຄງປະກອບບຸກຄະລາກອນຂອງ ຄຄຊ ປະກອບມີທັງໝົດຈຳນວນ 13 ທ່ານ ຊຶ່ງສອດຄ່ອງກັບ “ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ” ໃນນັ້ນປະກອບມີ ປະທານ ຄຄຊ 1 ທ່ານ, ຮອງປະທານ ຄຄຊ 2 ທ່ານ, ກຳມະການ ຄຄຊ 9 ທ່ານ ແລະ ເລຂາ ຄຄຊ 1 ທ່ານ ຄື: ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານເສດຖະກິດມະຫາພາກ ແລະ ບໍລິການ ເປັນປະທານ ຄຄຊ[1], ຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ ເປັນຮອງປະທານ ຄຄຊ ຜູ້ທີ່ໜຶ່ງ ທັງເປັນຜູ້ປະຈຳການ, ລັດຖະມົນຕີວ່າການ ກະຊວງການເງິນ

[1] ເດືອນ ສິງຫາ 2014 ທ່ານ ດຣ. ບຸນປອນ ບຸດຕະນະວົງ ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານເສດຖະກິດມະຫາພາກ ແລະ ບໍລິການ ໄດ້ມາຮັບຕຳແໜ່ງ ເປັນ ປະທານ ຄຄຊ.

ເປັນຮອງປະທານ ຄຄຊ ຜູ່ທີ່ສອງ[2], ປະທານ ຄະນະກຳມະການປັບປຸງທຸລະກິດແຫ່ງຊາດ[3], ລັດຖະມົນຕີຊ່ວຍວ່າການ ກະ ຊວງອຸດສາຫະກຳ ແລະ ການຄ້າ[4], ລັດຖະມົນຕີຊ່ວຍວ່າການ ກະຊວງແຜນການ ແລະ ການລົງທຶນ, ລັດຖະມົນຕີ ຊ່ວຍວ່າການ ກະຊວງຍຸຕິທຳ, ລັດຖະມົນຕີຊ່ວຍວ່າການ ກະຊວງພາຍໃນ, ຮອງປະທານ ກຳມາທິການເສດຖະກິດ ແຜນການ ແລະ ການເງິນ ສະພາແຫ່ງຊາດ, ຮອງຜູ່ວ່າການ ທະນາຄານ ແຫ່ງ ສປປ ລາວ, ຮອງຫົວໜ້າ ອົງການໄອຍະ ການປະຊາຊົນສູງສຸດ, ລັດຖະມົນຕີຊ່ວຍວ່າການ ຫ້ອງວ່າການລັດຖະບານ ເປັນ ກຳມະການ ຄຄຊ ແລະ ຫົວໜ້າ ສຳ ນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນ ເລຂາ ຄຄຊ[5] (ແຜນວາດ 1).

**ແຜນວາດ 1. ໂຄງຮ່າງການຈັດຕັ້ງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ**




**2. ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ສຄຄຊ ເປັນອົງການຈັດຕັ້ງໜຶ່ງ ທີ່ເຄື່ອນໄຫວຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013, ໂຄງປະ ກອບກົງຈັກຂອງ ສຄຄຊ ປະກອບດ້ວຍ 6 ພະແນກ ຄື: ພະແນກຈັດຕັ້ງ ແລະ ບໍລິຫານ, ພະແນກຄຸ້ມຄອງການ ອອກຈຳໜ່າຍຫຼັກຊັບ, ພະແນກຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ, ພະແນກນິຕິກຳ, ພະແນກຝຶກອົບຮົມ ແລະ ໂຄ ສະນາເຜີຍແຜ່ ແລະ ພະແນກຄຸ້ມຄອງຕະຫຼາດຫຼັກຊັບ (ແຜນວາດ 2).

---

[2] ເດືອນ ພຶດສະພາ 2014 ທ່ານ ດຣ. ລຽນ ທິແກ້ວ ລັດຖະມົນຕີວ່າການ ກະຊວງການເງິນ ໄດ້ມາຮັບຕຳແໜ່ງ ເປັນ ຮອງປະທານ ຄຄຊ.

[3] ເດືອນ ກັນຍາ 2014 ທ່ານ ພູເພັດ ຄຳພູນວົງ ປະທານຄະນະກຳມະການປັບປຸງທຸລະກິດແຫ່ງຊາດ ໄດ້ມາຮັບຕຳແໜ່ງ ເປັນ ກຳມະການ ຄຄຊ.

[4] ເດືອນ ທັນວາ 2014 ທ່ານ ສົມຈິດ ອິນທະມິດ ລັດຖະມົນຕີຊ່ວຍວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ມາຮັບຕຳແໜ່ງ ເປັນ ກຳ ມະການ ຄຄຊ.

[5] ອີງຕາມ ດຳລັດວ່າດ້ວຍການແຕ່ງຕັ້ງ ຮອງຜູ່ວ່າການ ທະນາຄານ ແຫ່ງ ສປປ ລາວ, ສະບັບເລກທີ: 348/ນຍ, ລົງວັນທີ 2 ຕຸລາ 2014, ທ່ານ ນ. ວັດທະນາ ດາລາລອຍ ຫົວໜ້າ ສຄຄຊ ຖືກແຕ່ງຕັ້ງ ເປັນ ຮອງຜູ່ວ່າການ ທະນາຄານ ແຫ່ງ ສປປ ລາວ.

**ແຜນວາດ 2. ໂຄງຮ່າງການຈັດຕັ້ງຂອງ ສຄຄຊ**




ສຄຄຊ ມີສິດ ແລະ ໜ້າທີ່ ໃນການອອກຂໍ້ຕົກລົງ, ຄໍາສັ່ງ, ແຈ້ງການ ແລະ ຄໍາແນະນໍາ ກ່ຽວກັບວຽກງານຫຼັກຊັບ; ອອກໃບອະນຸຍາດສ້າງຕັ້ງ, ອອກຄໍາສັ່ງໂຈະ ຫຼື ຍຸບເລີກການເຄື່ອນໄຫວຂອງບໍລິສັດຫຼັກຊັບ, ສາຂາ ແລະ ໜ່ວຍບໍລິການຂອງບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານຊັບສິນ ບົນພື້ນຖານການຮັບຮອງຂອງ ຄຄຊ ພ້ອມທັງອະນຸຍາດການປ່ຽນແປງການເຄື່ອນໄຫວທຸລະກິດ ແລະ ການປ່ຽນແປງລາຍການຂອງບໍລິສັດດັ່ງກ່າວ; ອອກ, ຖອນ ໃບຮັບຮອງການເຄື່ອນໄຫວ, ອອກຄໍາສັ່ງໂຈະ ຫຼື ຍຸບເລີກ ການເປັນທະນາຄານດູແລຊັບສິນ, ບໍລິສັດກວດສອບ, ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ແລະ ສະມາຄົມທຸລະກິດຫຼັກຊັບ ບົນພື້ນຖານການຮັບຮອງຂອງ ຄຄຊ; ອອກ, ຖອນ ໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ; ອະນຸຍາດການອອກຈໍາໜ່າຍຫຼັກຊັບຢູ່ພາຍໃນ ແລະ ຕ່າງປະເທດ, ອອກຄໍາສັ່ງໂຈະ ຫຼື ຍົກເລີກການອອກຈໍາໜ່າຍຫຼັກຊັບຢູ່ ສປປ ລາວ ຕາມທີ່ໄດ້ກໍານົດໄວ້ໃນ "ກົດໝາຍວ່າດ້ວຍຫຼັກຊັບ" ບົນພື້ນຖານການຕົກລົງເຫັນດີຂອງ ຄຄຊ; ອອກໃບອະນຸຍາດ ສ້າງຕັ້ງ, ຖອນ ແລະ ຍຸບເລີກ ກອງທຶນຮ່ວມ ບົນພື້ນຖານການຕົກລົງເຫັນດີຂອງ ຄຄຊ; ກໍານົດປະເພດຫຼັກຊັບ ຫຼື ຊັບສິນອື່ນ ທີ່ກອງທຶນຮ່ວມສາມາດລົງທຶນໃສ່ ແລະ ຮັບຮອງກົດລະບຽບ ຫຼື ສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ; ຮັບຮອງເອົາລະບຽບກ່ຽວກັບການເຄື່ອນໄຫວຂອງຕະຫຼາດຫຼັກຊັບ ແລະ ອະນຸຍາດການໃຫ້ບໍລິການໃດໜຶ່ງເພີ່ມເຕີມ ຫຼື ອອກຄໍາສັ່ງໂຈະການບໍລິການໃດໜຶ່ງຂອງຕະຫຼາດຫຼັກຊັບ; ອອກຄໍາສັ່ງໂຈະ, ຢຸດເຊົາ ຫຼື ອະນຸຍາດໃຫ້ສືບຕໍ່ການເຄື່ອນໄຫວຊື້-ຂາຍຫຼັກຊັບສ່ວນໃດສ່ວນໜຶ່ງ ຫຼື ທັງໝົດຂອງຕະຫຼາດຫຼັກຊັບ ໃນກໍລະນີ ລະບົບເຕັກໂນໂລຊີຂໍ້ມູນ-ຂ່າວສານ ຫາກຂັດຂ້ອງ, ການຊື້-ຂາຍຫຼັກຊັບມີການເໜັງຕີງຜິດປົກກະຕິ, ສະພາບເສດຖະກິດ-ສັງຄົມບໍ່ເອື້ອອໍານວຍ ຫຼື ເກີດເຫດສຸດວິໄສ ຊຶ່ງສິ່ງ ຫຼື ອາດສົ່ງຜົນກະທົບຮ້າຍແຮງຕໍ່ຜູ້ລົງທຶນ; ກໍານົດປະເພດສະມາຊິກຂອງສູນຮັບຝາກຫຼັກຊັບ; ອະນຸຍາດການນໍາໃຊ້ທຶນຈົດທະບຽນຂອງຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານຊັບສິນ; ຮັບຮອງເອົາກົດຈັນຍາບັນຂອງນັກວິຊາຊີບທຸລະກິດຫຼັກຊັບ ຕາມການສະເໜີຂອງສະມາຄົມທຸລະກິດຫຼັກຊັບ; ແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານຫຼັກຊັບ; ສະເໜີ ຄຄຊ ອອກຄໍາສັ່ງເປີດການສືບສວນ-ສອບສວນຄະດີກ່ຽວກັບວຽກງານຫຼັກຊັບ; ແຕ່ງຕັ້ງຄະນະກວດກາກັບທີ່ ແລະ ສະເໜີ ຄຄຊ ແຕ່ງຕັ້ງເຈົ້າໜ້າທີ່ສືບສວນ-ສອບສວນ; ອອກຄໍາສັ່ງໂຈະການເຄື່ອນໄຫວບັນຊີຫຼັກຊັບ ຫຼື ບັນຊີເງິນ ທີ່ຕິດພັນກັບການລະເມີດລະບຽບກົດໝາຍໃນການເຄື່ອນໄຫວວຽກງານຫຼັກຊັບ; ອອກຂໍ້ຕົກລົງປະຕິບັດມາດຕະການທາງບໍລິຫານ ຕໍ່ ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດລະບຽບກົດໝາຍກ່ຽວກັບວຽກງານຫຼັກຊັບ; ສະເໜີຍ້ອງຍໍ ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຜົນງານດີ

ເດັ່ນ ໃນການປະກອບສ່ວນເຄື່ອນໄຫວທາງດ້ານວຽກງານຫຼັກຊັບ; ປະຕິບັດສິດອື່ນ ຕາມການມອບໝາຍຂອງ ປະທານ ຄຄຊ.

ເພື່ອຮັບປະກັນການເຄື່ອນໄຫວວຽກງານຫຼັກຊັບ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ສອດຄ່ອງກັບເນື້ອໃນຂອງ "ກົດໝາຍວ່າດ້ວຍຫຼັກຊັບ" ທີ່ໄດ້ກຳນົດໄວ້ນັ້ນ ໃນປີ 2014 ສຄຄຊ ໄດ້ສຳເລັດການຄົ້ນຄວ້າ, ສ້າງ ແລະ ປັບປຸງລະບຽບການຈຳນວນໜຶ່ງ ເປັນຕົ້ນແມ່ນ ລະບຽບວ່າດ້ວຍການກວດກາວຽກງານຫຼັກຊັບ (ປັບປຸງ), ລະບຽບວ່າດ້ວຍການຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ (ປັບປຸງ), ລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນ (ປັບປຸງ), ລະບຽບວ່າດ້ວຍຄວາມພຽງພໍຂອງທຶນຂອງບໍລິສັດຫຼັກຊັບ (ໃໝ່), ລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ໃໝ່), ລະບຽບວ່າດ້ວຍທະນາຄານດູແລຊັບສິນ (ໃໝ່), ລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ (ໃໝ່) ຊຶ່ງໄດ້ຖືກຮັບຮອງຈາກ ທ່ານປະທານ ຄຄຊ ເປັນທີ່ຮຽບຮ້ອຍແລ້ວ.

ຄຽງຄູ່ກັນນັ້ນ ນອກຈາກບັນດາລະບຽບທີ່ກ່າວມາຂ້າງເທິງນັ້ນ ກໍ່ຍັງສຳເລັດການຮັບຮອງນິຕິກຳຈຳນວນໜຶ່ງ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານຫຼັກຊັບ ເປັນຕົ້ນ ບົດແນະນຳວ່າດ້ວຍການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ, ບົດແນະນຳວ່າດ້ວຍການຈັດຕັ້ງປະຕິບັດລະບຽບວ່າດ້ວຍຄວາມພຽງພໍຂອງທຶນຂອງບໍລິສັດຫຼັກຊັບ, ຂໍ້ຕົກລົງວ່າດ້ວຍຄ່າທຳນຽມສຳລັບການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ, ແຈ້ງການກ່ຽວກັບການລະດົມທຶນໂດຍການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນຢູ່ຕ່າງປະເທດ; ນອກຈາກນັ້ນ ຍັງໄດ້ສືບຕໍ່ຄົ້ນຄວ້າສ້າງ ແລະ ປັບປຸງລະບຽບຈຳນວນໜຶ່ງທີ່ຕິດພັນກັບວຽກງານຫຼັກຊັບ ເປັນຕົ້ນ ລະບຽບວ່າດ້ວຍການຄຸ້ມຄອງຕະຫຼາດຫຼັກຊັບ (ປັບປຸງ), ລະບຽບວ່າດ້ວຍການຄຸ້ມຄອງການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດໃນຕະຫຼາດຫຼັກຊັບຢູ່ ສປປ ລາວ (ປັບປຸງ), ລະບຽບວ່າດ້ວຍລາຍການທີ່ກ່ຽວພັນ (ໃໝ່) ແລະ ລະບຽບວ່າດ້ວຍການໄດ້ມາ ແລະ ຈຳໜ່າຍໄປຂອງຊັບສິນ (ໃໝ່). ປະຈຸບັນ ສຄຄຊ ໄດ້ປະກາດນຳໃຊ້ນິຕິກຳ ທັງໝົດ 24 ສະບັບ (ເອກະສານຊ້ອນທ້າຍ 1).

ມາຮອດທ້າຍປີ 2014 ສຄຄຊ ປະກອບມີພະນັກງານທັງໝົດ 49 ຄົນ (ຍິງ 21 ຄົນ), ປະກອບດ້ວຍ ຄະນະ ສຄຄຊ 2 ຄົນ (ຍິງ 1 ຄົນ), ຄະນະພະແນກ 9 ຄົນ (ຍິງ 4 ຄົນ), ພະນັກງານວິຊາການ 24 ຄົນ (ຍິງ 11 ຄົນ), ພະນັກງານ 95% ຈຳນວນ 14 ຄົນ (ຍິງ 5 ຄົນ), ມີລະດັບການສຶກສາ ປະລິນຍາເອກ 1 ຄົນ, ປະລິນຍາໂທ 17 ຄົນ (ຍິງ 7 ຄົນ), ປະລິນຍາຕີ 30 ຄົນ (ຍິງ 14 ຄົນ) ແລະ ຊັ້ນກາງ 1 ຄົນ.

## II. ຄວາມເຂົ້າໃຈພື້ນຖານກ່ຽວກັບວຽກງານຫຼັກຊັບ

### – ກອງປະຊຸມຜູ້ຖືຮຸ້ນ

ກອງປະຊຸມຜູ້ຖືຮຸ້ນ ແມ່ນການຈັດຕັ້ງສູງສຸດຂອງບໍລິສັດຈົດທະບຽນ, ກອງປະຊຸມຜູ້ຮຸ້ນຂອງບໍລິສັດຈົດທະບຽນ ມີ ສອງ ປະເພດ ຄື: ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ. ກອງປະຊຸມສາມັນ ຕ້ອງເປີດຂຶ້ນຢ່າງໜ້ອຍປີລະຄັ້ງ, ໄລຍະເວລາຂອງການເປີດກອງປະຊຸມ ແມ່ນກຳນົດໄວ້ໃນກົດລະບຽບຂອງບໍລິສັດ ເພື່ອຮັບຮອງເອົາບົດສະຫຼຸບລາຍງານ ກ່ຽວກັບການດຳເນີນທຸລະກິດ, ເອກະສານລາຍງານການເງິນ, ການແບ່ງເງິນປັນຜົນ, ແຜນການດຳເນີນທຸລະກິດຂອງບໍລິສັດ ເຫຼົ່ານີ້ເປັນຕົ້ນ. ສຳລັບກອງປະຊຸມວິສາມັນ ແມ່ນເປີດຂຶ້ນເວລາໃດກໍ່ໄດ້ຖ້າເຫັນວ່າມີຄວາມຈຳ ເປັນ ເຊັ່ນ: ການປ່ຽນແປງກົດລະບຽບຂອງບໍລິສັດ, ການເພີ່ມ ຫຼື ຫຼຸດ ທຶນຈົດທະບຽນ ແລະ ການປ່ຽນແປງຜູ້ກວດສອບພາຍນອກ ເຫຼົ່ານີ້ເປັນຕົ້ນ.

ການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແມ່ນ ສິດ ແລະ ໜ້າທີ່ ຂອງຜູ້ຖືຮຸ້ນທັງໝົດທີ່ມີລາຍຊື່ໃນປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ. ຜູ້ຖືຮຸ້ນຄວນເຂົ້າຮ່ວມກອງປະຊຸມດັ່ງກ່າວ ເພື່ອຮັກສາສິດ ແລະ ຜົນປະໂຫຍດຂອງຕົນ ໃນການຕັດສິນບັນຫາສຳຄັນຂອງບໍລິສັດ, ກຳນົດທິດທາງ ແລະ ແຜນການດຳເນີນທຸລະກິດຂອງບໍລິສັດທີ່ຕົນຖືຮຸ້ນ, ພ້ອມທັງ ມີສິດສະເໜີຄຳຄິດຄຳເຫັນ ຫຼື ຕັ້ງຄຳຖາມເຈາະຈີ້ມ ກ່ຽວກັບການດຳທຸລະກິດຂອງບໍລິສັດ ແລະ ກວດສອບເອກະສານຂອງບໍລິສັດ ເພື່ອປົກປ້ອງຜົນປະໂຫຍດຂອງຕົນຢ່າງເຕັມສ່ວນ.

– **ທະນາຄານດູແລຊັບສິນ**

ທະນາຄານດູແລຊັບສິນ ແມ່ນ ທະນາຄານທຸລະກິດ ພາຍໃນ ຫຼື ຕ່າງປະເທດ ທີ່ໄດ້ຮັບອະນຸຍາດຈາກ ສຄຄຊ ໃຫ້ເຄື່ອນໄຫວເປັນຜູ້ດູແລຊັບສິນໃຫ້ແກ່ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ທະນາຄານດູແລຊັບສິນ ມີໜ້າທີ່ເປັນຜູ້ໃຫ້ບໍລິການໃນການ ເກັບຮັກສາຂໍ້ມູນ, ຊັບສິນ ຂອງລູກຄ້າໃຫ້ປອດໄພ, ຊຳລະເງິນ ຫຼື ຫຼັກຊັບ ຕາມຄຳສັ່ງຂອງລູກຄ້າ, ໂອນບັນຊີຫຼັກຊັບ ແລະ ບັນຊີເງິນຂອງລູກຄ້າ ຈາກທະນາຄານດູແລຊັບສິນຂອງຕົນ  ໄປຍັງທະນາຄານດູແລຊັບສິນອື່ນ  ຕາມການສະເໜີຂອງລູກຄ້າ, ເປັນຜູ້ຕາງໜ້າໃຫ້ແກ່ລູກຄ້າ ເຂົ້າຮ່ວມ ແລະ ລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ ຕາມການມອບໝາຍຂອງລູກຄ້າ, ນອກນັ້ນ ກໍ່ຍັງມີໜ້າທີ່ໃນການແຈ້ງໃຫ້ລູກຄ້າຊາບກ່ຽວກັບຜົນການສະສາງ-ຊຳລະທຸລະກຳຫຼັກຊັບ ພາຍຫຼັງສິ້ນສຸດການຊື້-ຂາຍຫຼັກຊັບ, ຮັກສາຄວາມລັບກ່ຽວກັບຂໍ້ມູນຂອງລູກຄ້າ ແລະ ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ລະບຸໄວ້ໃນສັນຍາກັບລູກຄ້າ.

## III. ສະພາບການເຄື່ອນໄຫວວຽກງານຫຼັກຊັບ ໃນປີ 2014

### 1. ສະພາບລວມຂອງຕະຫຼາດຫຼັກຊັບ ຢູ່ ຕ່າງປະເທດ

ໃນປີ 2014 ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດໂດຍລວມ ແມ່ນປັບຕົວເພີ່ມຂຶ້ນ ເມື່ອທຽບໃສ່ປີ 2013 ອັນເນື່ອງມາຈາກການເພີ່ມຂຶ້ນຂອງຕົວເລກອັດຕາການຈ້າງງານຂອງ ສ.ອາເມລິກາ ແລະ ທະນາຄານກາງຂອງ ສ.ອາເມລິກາ ກໍ່ຍັງຈະຄົງດຳເນີນມາດຕະການກະຕຸ້ນເສດຖະກິດດ້ວຍການສືບຕໍ່ນະໂຍບາຍປະລິມານເງິນແບບຜ່ອນຄາຍ (QE) ແລະ ບໍ່ຫຼຸດປະລິມານການຊື້ພັນທະບັດລາຍເດືອນ. ນອກນັ້ນ ຕົວເລກ GDP ຂອງກຸ່ມປະເທດເອີຣົບ (Euro Zone) ກໍ່ໄດ້ປັບຕົວເພີ່ມຂຶ້ນ 0,3%, ທະນາຄານກາງເອີຣົບ ຍັງໄດ້ປະກາດຫຼຸດອັດຕາດອກເບ້ຍທຸກປະເພດລົງ ແລະ ຍັງໄດ້ວາງແຜນທີ່ຈະຊື້ຊັບສິນຂອງພາກເອກະຊົນ ເພື່ອກະຕຸ້ນເສດຖະກິດໃນຂົງເຂດເອີຣົບ. ສຳລັບຢູ່ອາຊີກໍ່ໄດ້ຮັບແຮງໜູນຈາກທະນາຄານກາງຂອງ ສປ.ຈີນ ທີ່ໄດ້ອັດສີດເງິນເຂົ້າສູ່ລະບົບເສດຖະກິດເພື່ອແກ້ໄຂພາວະທາງການເງິນ ແລະ ສຳນັກງານພາສີອາກອນ ຂອງ ສປ.ຈີນ ກໍ່ໄດ້ເປີດເຜີຍວ່າ ການສົ່ງອອກຂອງ ສປ.ຈີນ ຂະ ຫຍາຍຕົວເຖິງ 9,4% ເມື່ອທຽບໃສ່ປີ 2013 ແລະ ດັດຊະນີຜູ້ບໍລິຫານຝ່າຍຈັດຊື້ກໍ່ໄດ້ຂະຫຍາຍຕົວຂຶ້ນສູງສຸດໃນຮອບ 17 ເດືອນ.

ບັນດາປັດໄຈຂ້າງເທິງເຫຼົ່ານັ້ນ ໄດ້ສົ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດທ້າຍປີ 2014 ໄດ້ປັບຕົວເພີ່ມຂຶ້ນ ເຊັ່ນ: ຕະຫຼາດຫຼັກຊັບ ສ.ອາເມລິກາ ດັດຊະນີ NASDAQ ປັບຕົວເພີ່ມຂຶ້ນ 17,79%, S&P500  13,74% ແລະ DowJones 10,30%. ດັດຊະນີຕະຫຼາດຫຼັກຊັບ ເອີຣົບ ກໍ່ປັບຕົວເພີ່ມຂຶ້ນຄື: ເຢຍລະມັນ (DAX) 4,00%, ອັງກິດ (FTSE) 0,07%. ສ່ວນຕະຫຼາດຫຼັກຊັບອາຊີ ຫຼາຍຕະຫຼາດກໍ່ໄດ້ປັບຕົວເພີ່ມຂຶ້ນເຊັ່ນດຽວກັນ ຄື:

ຕະຫຼາດຫຼັກຊັບ ສປ.ຈີນ (SHENZHEN) ປັບຕົວເພີ່ມຂຶ້ນ 27,72%, (SHANGHAI) 11,19%, ໄຕ້ຫວັນ (TWSE) 11,85% ແລະ ຍີ່ປຸ່ນ (NIKKEI) 10,85%. ສຳລັບດັດຊະນີຕະຫຼາດຫຼັກຊັບຂອງກຸ່ມປະເທດອາຊຽນ ຫຼາຍຕະຫຼາດກໍ່ໄດ້ປັບຕົວເພີ່ມຂຶ້ນ ຄື: ຕະຫຼາດຫຼັກຊັບ ຟິລິບປິນ (PCOMP) ປັບຕົວເພີ່ມຂຶ້ນ 19,46%, ອິນໂດເນເຊຍ (JCI) 18,76%, ໄທ (SET) 14,01%, ສິງກະໂປ (STRAIT TIMES) 4,50%, ມາເລເຊຍ (FBMLCI) 1,66% ແລະ ຕະຫຼາດຫຼັກຊັບ ສສ.ຫວຽດນາມ (HANOI) ແລະ (HOCHIMIN) ກໍ່ເພີ່ມຂຶ້ນ 40,01% ແລະ 17,34% ຕາມລາດັບ.

### 2. ສະພາບລວມຂອງຕະຫຼາດຫຼັກຊັບລາວ

#### 2.1. ການລະດົມທຶນດ້ວຍການອອກຈຳໜ່າຍຫຼັກຊັບ

ໃນປີ 2014 ມີ 1 ບໍລິສັດ ຄື: ບໍລິສັດ ປີໂຕຣລ້ຽມເທຣດດິງ ລາວ ມະຫາຊົນ (PTL) ໄດ້ຮັບການອະນຸຍາດຈາກ ສຄຄຊ ໃຫ້ອອກຈຳໜ່າຍຮຸ້ນຄັ້ງທຳອິດໃຫ້ແກ່ມວນຊົນ (Initial Public Offering: IPO) ຊຶ່ງບໍລິສັດສາມາດລະດົມທຶນໄດ້ທັງໝົດຈຳນວນ 240 ຕື້ກີບ (ຕາຕະລາງ 1). ຈຸດປະສົງຂອງການລະດົມທຶນຂອງ PTL ແມ່ນເພື່ອນຳໃຊ້ເຂົ້າໃນການຂະຫຍາຍກິດຈະການ ຄື: ລົງທຶນໃນການສ້າງສະຖານີບໍລິການນ້ຳມັນຈຳນວນ 20 ສະຖານີ ທົ່ວປະເທດ, ໃຊ້ເປັນເງິນທຶນໝູນວຽນເພື່ອບໍລິຫານການສັ່ງຊື້ນ້ຳມັນຈາກຕ່າງປະເທດ ແລະ ລົງທຶນໃນການບໍລິຫານລະບົບການຂົນສົ່ງ.

**ຕາຕະລາງ 1: ສະຫຼຸບຜົນການລະດົມທຶນ ໂດຍຜ່ານ IPO ຂອງ PTL (ເດືອນ ທັນວາ 2014)**

| ລຳດັບ | ປະເພດຜູ້ລົງທຶນ | ຈຳນວນຮຸ້ນ (ຮຸ້ນ) | % ທຽບໃສ່ຈຳນວນຮຸ້ນທັງໝົດຂອງບໍລິສັດ(%) | ຈຳນວນຜູ້ລົງທຶນທີ່ໄດ້ຊື້ຮຸ້ນ(ລາຍ) | ຈຳນວນເງິນທີ່ໄດ້ຈາກການລະດົມທຶນ(ກີບ) |
|---|---|---|---|---|---|
| 1 | ຜູ້ລົງທຶນພາຍໃນປະເທດ | 21.503.200 | 9,15 | 451 | 86.012.800.000 |
| 2 | ຜູ້ລົງທຶນຕ່າງປະເທດ | 38.496.800 | 16,38 | 59 | 153.987.200.000 |
| ລວມ | | 60.000.000 | 25,53 | 510 | 240.000.000.000 |

ນອກນັ້ນ, ໃນເດືອນ ທັນວາ ປີ 2014 ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ກໍ່ໄດ້ຮັບການອະນຸຍາດຈາກ ສຄຄຊ ໃຫ້ອອກຈຳໜ່າຍຮຸ້ນກູ້ ໃນວົງຈຳກັດ (ຂາຍສະເພາະໃຫ້ຜູ້ລົງທຶນປະເພດສະຖາບັນ) ຢູ່ ປະເທດໄທ ຊຶ່ງບໍລິສັດສາມາດລະດົມທຶນໄດ້ທັງໝົດຈຳນວນ 1.625 ຕື້ກີບ (ຫຼື 6.500 ລ້ານບາດ) (ຕາຕະລາງ 2). ຈຸດປະສົງການລະດົມທຶນຂອງ EDL-Gen ແມ່ນເພື່ອຂະຫຍາຍທຸລະກິດ ໂດຍທຶນທີ່ລະດົມໄດ້ ຈະນຳໄປຊື້ໂຄງການເຂື່ອນໄຟຟ້າທີ່ ລັດວິສາຫະກິດໄຟຟ້າລາວ ເປັນເຈົ້າຂອງ 100% ຊຶ່ງປະກອບມີ 4 ເຂື່ອນ ຄື: ໂຄງການເຂື່ອນໄຟຟ້າ ນ້ຳຖານ 2, ນ້ຳຖານ 3, ນ້ຳສະນາ ແລະ ຫ້ວຍລຳພັນໃຫຍ່ ແລະ ໂຄງການຜູ້ຜະລິດພະລັງງານອິດສະຫຼະ (Independent Power Producer: IPP) ທີ່ ລັດວິສາຫະກິດໄຟຟ້າລາວ ຖືຮຸ້ນຢູ່ 5 ໂຄງການ ຄື: ນ້ຳງື່ມ 5, ນ້ຳລອງ, ນ້ຳອູ 2, ນ້ຳອູ 5 ແລະ ນ້ຳອູ 6.

**ຕາຕະລາງ 2: ສະຫຼຸບຜົນການອອກຈຳໜ່າຍຮຸ້ນກູ້ ຢູ່ ປະເທດໄທ ຂອງ EDL-Gen (ເດືອນ ທັນວາ 2014 )**

| ລຳດັບ | ປະເພດຜູ່ລົງທຶນ | ປະເພດຮຸ້ນກູ້ | ອາຍຸ | ຜົນຕອບແທນ (%ຕໍ່ປີ) | ຈຳນວນທຶນທີ່ລະດົມໄດ້ (ລ້ານບາດ) |
|---|---|---|---|---|---|
| 1 | ສະຖາບັນ ແລະ ຜູ່ທີ່ມີລາຍຮັບສູງ | ຮຸ້ນກູ້ບໍ່ດ້ອຍສິດ ແລະ ບໍ່ມີຫຼັກຊັບຄໍ້າປະກັນ | 5 ປີ | 4,95 | 1.500 |
| 2 | | | 7 ປີ | 5,20 | 2.000 |
| 3 | | | 10 ປີ | 5,45 | 3.000 |
| **ລວມ** | | | | | **6.500** |

### 2.2. ການເຄື່ອນໄຫວຂອງບໍລິສັດຈົດທະບຽນ

ຮອດປີ 2014 ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວມີ 4 ບໍລິສັດ ຄື: ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen), ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL), ບໍລິສັດ ລາວເວີນ ມະຫາຊົນ (LWPC) ແລະ ບໍລິສັດ ປີໂຕຣລ້ຽມເທຣດດິງ ລາວ ມະຫາຊົນ (PTL). ຊຶ່ງໃນໄລຍະຜ່ານມາທັງ 4 ບໍລິສັດ ກໍ່ໄດ້ມີການຈ່າຍເງິນປັນຜົນໃຫ້ແກ່ຜູ່ຖືຮຸ້ນ ດັ່ງຕາຕະລາງ 3.

**ຕາຕະລາງ 3: ການຈ່າຍເງິນປັນຜົນຂອງ 4 ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ແຕ່ປີ 2011 ຫາ 2013**

ຫົວໜ່ວຍ: ກີບ/ຮຸ້ນ

| ລຳດັບ | BCEL | | | EDL-Gen | | | LWPC[6] |
|---|---|---|---|---|---|---|---|
| | 2011 | 2012 | 2013 | 2011 | 2012 | 2013 | 2013 |
| **ງວດທີ 1** | ປັນຜົນຄັ້ງດຽວໃນປີ | 436,00 | 405,00 | 177,97 | 170,00 | 182,00 | - |
| **ງວດທີ 2** | | 443,00 | 380,00 | 320,00 | 280,00 | 293,00 | ບໍ່ມີປັນຜົນ |
| **ລວມ** | 776.58 | 879,00 | 785,00 | 497,97 | 450,00 | 475,00 | |

### 2.3. ການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

ເພື່ອຕອບສະໜອງຄວາມຕ້ອງການຊື້-ຂາຍຫຼັກຊັບຂອງຜູ່ລົງທຶນທີ່ເພີ່ມຂຶ້ນ ຕະຫຼາດຫຼັກຊັບລາວ ໄດ້ພັດທະນາການບໍລິການການແລກປ່ຽນຊື້-ຂາຍຮຸ້ນຈາກການຈັບຄູ່ເປັນໄລຍະ 30 ນາທີ ຕໍ່ ຄັ້ງ ມາເປັນການຈັບຄູ່ແບບຕໍ່ເນື່ອງ ວິນາທີ ຕໍ່ ວິນາທີ ແລະ ເພີ່ມລາຄາຂອບເຂດລາຍວັນ ຈາກ ±5% ເປັນ ±10% ໂດຍເລີ່ມປະຕິບັດ ໃນວັນທີ 3 ທັນວາ 2014 ເປັນຕົ້ນມາ.

ປີ 2014 ດັດຊະນີຕະຫຼາດຫຼັກຊັບລາວປິດຢູ່ທີ່ 1.414,19 ຈຸດ ເພີ່ມຂຶ້ນ 160,86 ຈຸດ ຫຼື ເທົ່າກັບ 12,83% (ແຜນວາດ 3), ມີມູນຄ່າການຊື້-ຂາຍ 156,31 ຕື້ກີບ ຫຼຸດລົງ 32,57 ຕື້ກີບ ຫຼື ເທົ່າກັບ 17,24% ແລະ ມີຈຳນວນຮຸ້ນຊື້-ຂາຍທັງໝົດ 26,84 ລ້ານຮຸ້ນ ເພີ່ມຂຶ້ນ 2,30% ທຽບໃສ່ປີຜ່ານມາ (ແຜນວາດ 4), ພ້ອມນັ້ນ ໃນປີ 2014 ຕະຫຼາດຫຼັກຊັບລາວມີມູນຄ່າຕະຫຼາດເທົ່າກັບ 13,26% ຂອງ ລວມຍອດຜະລິດຕະພັນພາຍໃນ (GDP) ປີ 2013 (ແຜນວາດ 5).

---

[6] LWPC ຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນເດືອນ ທັນວາ 2013.

ແຜນວາດ 3: ດັດຊະນີຕະຫຼາດຫຼັກຊັບລາວ




ແຜນວາດ 4: ມູນຄ່າການຊື້-ຂາຍ ແລະ ປະລິມານ



**ແຜນວາດ 5: ມູນຄ່າຕະຫຼາດ ແຕ່ປີ 2011 – 2014**




**<u>ໝາຍເຫດ:</u>** ສຳລັບມູນຄ່າຕະຫຼາດຂອງປີ 2014 ແມ່ນທຽບໃສ່ລວມຍອດຜະລິດຕະພັນພາຍໃນ (GDP) ປີ 2013.

ຮຸ້ນຂອງ BCEL ມີລາຄາຊື້-ຂາຍສະເລ່ຍ 7.827 ກີບ ຫຼຸດລົງ 718 ກີບ, ຕະຫຼອດປີ 2014 ມີລາຄາສູງສຸດຢູ່ທີ່ 8.500 ກີບ ແລະ ຕໍ່າສຸດ 6.900 ກີບ (ແຜນວາດ 6) ແລະ ມີມູນຄ່າການ ຊື້-ຂາຍ 22,39 ຕື້ກີບ ຫຼຸດລົງ 717,81% ເມື່ອທຽບໃສ່ປີ 2013 (ສະເລ່ຍ 90,31 ລ້ານກີບ/ມື້), ການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 44,48% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 9,52% (ສັດສ່ວນການຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ໄດ້ສູງສຸດແມ່ນ 10%).

ຮຸ້ນຂອງ EDL-Gen ມີລາຄາຊື້-ຂາຍສະເລ່ຍ 6.612 ກີບ ເພີ່ມຂຶ້ນ 277 ກີບ, ຕະຫຼອດປີ 2014 ມີລາຄາສູງສຸດຢູ່ທີ່ 7.200 ກີບ ແລະ ຕໍ່າສຸດ 5.800 ກີບ (ແຜນວາດ 6) ແລະ ມີມູນຄ່າຊື້-ຂາຍ 95,67 ຕື້ກີບ ຫຼຸດລົງ 5,65% ເມື່ອທຽບ ໃສ່ປີ 2013 (ສະເລ່ຍ 385,80 ລ້ານກີບ/ມື້). ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 59,63% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,25% (ສັດສ່ວນການຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ໄດ້ສູງສຸດແມ່ນ 20%).

ຮຸ້ນຂອງ LWPC ມີລາຄາຊື້-ຂາຍສະເລ່ຍ 9.852 ກີບ ຫຼຸດລົງ 1.144 ກີບ, ຕະຫຼອດປີ 2014 ມີລາຄາສູງສຸດຢູ່ທີ່ 10.500 ກີບ ແລະ ຕໍ່າສຸດ 7.900 ກີບ (ແຜນວາດ 6) ແລະ ມີມູນຄ່າຊື້-ຂາຍ 413,78 ລ້ານກີບ ເພີ່ມຂຶ້ນ 149,21% ເມື່ອທຽບໃສ່ປີ 2013 (ສະເລ່ຍ 1,66 ລ້ານກີບ/ມື້) ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 62,95% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສຳລັບສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດຂອງຮຸ້ນດັ່ງ ກ່າວແມ່ນບໍ່ຈຳກັດ ຊຶ່ງໃນປະຈຸບັນແມ່ນຢູ່ທີ່ 2,70%.

ໃນຕົ້ນເດືອນ ທັນວາ ປີ 2014 ໄດ້ມີບໍລິສັດເຂົ້າມາຈົດທະບຽນ ເພີ່ມເຕີມ 1 ບໍລິສັດ ຄື: PTL ຊຶ່ງໄດ້ເຂົ້າຊື້-ຂາຍຢູ່ຕະຫຼາດຫຼັກຊັບລາວ ໃນວັນທີ 9 ທັນວາ 2014 ໂດຍມີລາຄາມື້ທຳອິດປິດຢູ່ທີ່ 4.250 ກີບ ສູງກວ່າລາຄາ IPO ຢູ່ 250 ກີບ (ແຜນວາດ 6) ຫຼື 6,25%. ຊຶ່ງຮຸ້ນຂອງ PTL ໃນປີ 2014 ມີລາຄາຊື້-ຂາຍສະເລ່ຍ 3.993 ກີບ, ມີປະລິມານຊື້-ຂາຍທັງໝົດ 9,47 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 37,82 ຕື້ກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 47,59% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສຳລັບສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດຂອງຮຸ້ນດັ່ງກ່າວແມ່ນບໍ່ຈຳກັດ ຊຶ່ງໃນປະຈຸບັນແມ່ນຢູ່ທີ່ 13,10%.

**ແຜນວາດ 6: ການເຄື່ອນໄຫວລາຄາຂອງຮຸ້ນ BCEL, EDL-Gen, LWPC ແລະ PTL**




ພາຍຫຼັງທີ່ຕະຫຼາດຫຼັກຊັບລາວດຳເນີນທຸລະກິດມາເປັນເວລາສີ່ປີ ເຫັນໄດ້ວ່າ ຕະຫຼາດຫຼັກຊັບລາວໄດ້ຮັບຄວາມສົນໃຈຈາກຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ຊຶ່ງສາມາດເຫັນໄດ້ຈາກບັນຊີຊື້-ຂາຍຫຼັກຊັບຂອງຜູ້ລົງທຶນໄດ້ເພີ່ມຂຶ້ນຈາກ 8.910 ບັນຊີໃນປີ 2012 ມາເປັນ 9.464 ບັນຊີ ໃນປີ 2013 ແລະ ເປັນ 11.406 ບັນຊີ ໃນປີ 2014. ໃນນັ້ນ ຈຳນວນບັນຊີຊື້-ຂາຍຫຼັກຊັບຂອງຜູ້ລົງທຶນພາຍໃນ ມີທັງໝົດ 9.188 ບັນຊີ (ຜູ້ລົງທຶນພາຍໃນປະເພດບຸກຄົນ 9.154 ບັນຊີ ແລະ ຜູ້ລົງທຶນພາຍໃນປະເພດສະຖາບັນ 34 ບັນຊີ) ຫຼື ກວມເອົາ 80,55% ແລະ ບັນຊີຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດມີທັງໝົດ 2.164 ບັນຊີ (ຜູ້ລົງທຶນຕ່າງປະເທດປະເພດບຸກຄົນ 2.164 ບັນຊີ ແລະ ຜູ້ລົງທຶນຕ່າງປະເທດປະເພດສະຖາບັນ 54 ບັນຊີ) ຫຼື ເທົ່າກັບ 19,45% (ແຜນວາດ 7). ເຖິງແມ່ນວ່າບັນຊີຊື້-ຂາຍຫຼັກຊັບຜູ້ລົງທຶນຕ່າງປະເທດກວມເອົາພຽງແຕ່ 19,45% ຂອງບັນຊີທັງໝົດກໍ່ຕາມ ແຕ່ມູນຄ່າການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ມີສູງເຖິງ 69,11% ຂອງມູນຄ່າການຊື້-ຂາຍທັງໝົດ (ແຜນວາດ 8).

**ແຜນວາດ 7:      ຈຳນວນບັນຊີຊື້-ຂາຍຫຼັກຊັບຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ປະຈຳປີ 2014**




**ແຜນວາດ 8:      ເປີເຊັນມູນຄ່າການຊື້-ຂາຍຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ປີ 2013 ແລະ 2014**




## 2.4. ສະຖາບັນສື່ກາງດ້ານຫຼັກຊັບ

ສະຖາບັນສື່ກາງດ້ານຫຼັກຊັບປະກອບດ້ວຍ ບໍລິສັດຫຼັກຊັບ, ບໍລິສັດບໍລິຫານຊັບສິນ, ທະນາຄານດູແລຊັບສິນ, ບໍລິສັດກວດສອບ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ແລະ ສະມາຄົມທຸລະກິດຫຼັກຊັບ. ແຕ່ປະຈຸບັນ ຢູ່ ສປປ ລາວ ມີພຽງແຕ່ບໍລິສັດຫຼັກຊັບ,  ບໍລິສັດກວດສອບ ແລະ ທະນາຄານດູແລຊັບສິນ.

ໃນປະຈຸບັນ   ມີບໍລິສັດຫຼັກຊັບ ທັງໝົດ 4 ແຫ່ງ ຄື:  ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ, ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ, ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ແລະ ບໍລິສັດຫຼັກຊັບ ເອພີເອັມລາວ ຈຳກັດ (ເອກະສານຊ້ອນທ້າຍ 2).    ຜ່ານການເຄື່ອນໄຫວທຸລະກິດດ້ານຫຼັກຊັບ ເຫັນວ່າ ບັນດາບໍລິສັດຫຼັກຊັບ ຍັງມີສະພາບຄ່ອງ ແລະ ບໍ່ມີຄວາມສ່ຽງທາງດ້ານການເງິນ ເນື່ອງຈາກວ່າ ບັນດາບໍລິສັດຫຼັກຊັບດັ່ງກ່າວ ຍັງບໍ່ມີໜີ້ສິນ ຫຼື ມີການລົງທຶນໃນໄລຍະຍາວ ແລະ ຊັບສິນໝູນວຽນສ່ວນໃຫຍ່ຂອງບໍລິສັດຫຼັກຊັບ ແມ່ນເງິນຝາກທະນາຄານ. ໃນປີ 2014 ບໍລິສັດຫຼັກຊັບ ໄດ້ປັບປຸງໂປຼແກຼມບັນຊີ ເພື່ອໃຫ້ສາມາດລາຍງານອັດຕາສ່ວນຄວາມພຽງພໍຂອງທຶນ ແລະ ເລີ່ມແຕ່ເດືອນ ກໍລະກົດ 2014

ເປັນຕົ້ນມາ ສອງບໍລິສັດຫຼັກຊັບ ຄື: ບໍລິສັດຫຼັກຊັບລ້ານຊ້າງ ມະຫາຊົນ ແລະ ບໍລິສັດຫຼັກຊັບ ທຄຕລ-ກທ ຈໍາກັດ ແມ່ນສາມາດຈັດຕັ້ງປະຕິບັດການລາຍງານອັດຕາສ່ວນຄວາມພຽງພໍຂອງທຶນໄດ້ຢ່າງປົກກະຕິ.

ທ້າຍປີ 2014 ບໍລິສັດຫຼັກຊັບ ທັງ 4 ແຫ່ງ ມີທຶນຈົດທະບຽນລວມກັນທັງໝົດ 305 ຕື້ກີບ ເທົ່າກັບປີຜ່ານມາ, ຊັບສິນທັງໝົດ 390,55 ຕື້ກີບ ຫຼຸດລົງ 1,88 ຕື້ກີບ ຫຼື ເທົ່າກັບ -0,48%, ຊັບສິນສຸດທິ 304,48 ຕື້ກີບ ຫຼຸດລົງ 6,8 ຕື້ກີບ ຫຼື ເທົ່າກັບ -2,18%, ລາຍຮັບ 38,17 ຕື້ກີບ ເພີ່ມຂຶ້ນ 15,04 ຕື້ກີບ ຫຼື ເທົ່າກັບ 65,04% ທຽບໃສ່ປີຜ່ານມາ ແລະ ປີນີ້ ມີກໍາໄລ 1,57 ຕື້ກີບ ຫຼຸດລົງ 3,78 ຕື້ກີບ ຫຼື 70,62% ຊຶ່ງສາເຫດທີ່ເຮັດໃຫ້ກໍາໄລຫຼຸດລົງ ເນື່ອງຈາກວ່າ ບໍລິສັດຫຼັກຊັບທີ່ສ້າງຕັ້ງຂຶ້ນໃໝ່ນັ້ນ ຍັງສ້າງລາຍຮັບໄດ້ບໍ່ສູງ ແຕ່ມີລາຍຈ່າຍໃນການເຄື່ອນໄຫວທຸລະກິດຂ້ອນຂ້າງສູງ (ແຜນວາດ 9).

**ແຜນວາດ 9: ຜົນການເຄື່ອນໄຫວທຸລະກິດຫຼັກຊັບ ປີ 2013-2014**

(ຫົວໜ່ວຍ: ຕື້ກີບ)




ປີ 2014 ມີນັກວິຊາຊີບທຸລະກິດຫຼັກຊັບ ທັງໝົດ 27 ຄົນ ເພີ່ມຂຶ້ນ 4 ຄົນ ທຽບໃສ່ປີ 2013 ໃນນີ້ນາຍໜ້າຊື້-ຂາຍຫຼັກຊັບ 25 ຄົນ ແລະ ທີ່ປຶກສາທາງການເງິນ ຈໍານວນ 2 ຄົນ.

ນອກນັ້ນ, ສຄຄຊ ໄດ້ອອກໃບຮັບຮອງການເຄື່ອນໄຫວເປັນທະນາຄານດູແລຊັບສິນ ໃຫ້ແກ່ ທະນາຄານກຸງເທບ ຈໍາກັດ (ມະຫາຊົນ) ສາຂານະຄອນຫຼວງວຽງຈັນ. ບໍລິສັດກວດສອບທີ່ໄດ້ຮັບການຮັບຮອງ ຈາກ ສຄຄຊ ໃຫ້ດໍາເນີນທຸລະກິດກ່ຽວກັບວຽກງານການກວດສອບດ້ານຫຼັກຊັບ ມີທັງໝົດ 3 ບໍລິສັດ ຄື: ບໍລິສັດ ພຣາຍສ໌ວໍເຕີ້ເຮົາສ໌ກູເປີສ໌ ຈໍາກັດ, ບໍລິສັດ ເຄພີເອັມຈີລາວ ຈໍາກັດ ແລະ ບໍລິສັດ ເອີນແອນຢັງ (ລາວ) ຈໍາກັດ.

**2.5. ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່**

ເພື່ອຊຸກຍູ້ໃຫ້ສັງຄົມມີຄວາມເຂົ້າໃຈ ແລະ ມີສ່ວນຮ່ວມໃນການພັດທະນາຕະຫຼາດທຶນ ສຄຄຊ ໄດ້ຈັດຕັ້ງການໂຄສະນາເຜີຍແຜ່ຄວາມຮູ້ດ້ານວຽກງານຫຼັກຊັບ ໃຫ້ແກ່ມວນຊົນດ້ວຍຫຼາຍຮູບການ ເປັນຕົ້ນແມ່ນການເຜີຍແຜ່ຜ່ານພາຫະນະສື່ມວນຊົນຕ່າງໆ ເຊັ່ນ: ໜັງສືພິມລາວພັດທະນາ, ໂທລະພາບແຫ່ງຊາດລາວ ຊ່ອງ 1 ແລະ 3, ເວັບໄຊ້ ແລະ ຄື້ນວິທະຍຸ 99,7 MHz ຂອງ ທະນາຄານ ແຫ່ງ ສປປ ລາວ; ລົງເຜີຍແຜ່ກັບທີ່ ໃນຫົວຂໍ້ "ກົດໝາຍວ່າດ້ວຍຫຼັກຊັບ ແລະ ວຽກງານຫຼັກຊັບ" ຢູ່ບັນດາກະຊວງ ແລະ ອົງ ການຕ່າງໆໃນນະຄອນ ຫຼວງວຽງຈັນ ຈຳນວນ 16 ຄັ້ງ ມີຜູ່ເຂົ້າຮ່ວມທັງໝົດຈຳນວນ 1.922 ຄົນ ແລະ 7 ແຂວງ, ມີຜູ່ເຂົ້າຮ່ວມທັງໝົດ ຈຳນວນ 586 ຄົນ. ນອກນັ້ນ ກໍ່ໄດ້ສົມທົບກັບຕະຫຼາດຫຼັກຊັບລາວ, ບໍລິສັດຫຼັກຊັບ ເອພີເອັມລາວ ຈຳກັດ ແລະ ສະຖາບັນຄົ້ນຄວ້າໂນມູລະ ຈັດຕັ້ງກອງປະຊຸມສຳມະນາໃນຫົວຂໍ້ທີ່ຕິດພັນກັບວຽກງານຫຼັກຊັບ ໃຫ້ແກ່ພາກສ່ວນຕ່າງໆຢູ່ຕ່າງແຂວງ ຈຳນວນ 5 ຄັ້ງ ໂດຍມີຜູ່ເຂົ້າຮ່ວມຈຳນວນທັງໝົດ 372 ຄົນ.

**2.6. ການຮ່ວມມືສາກົນ**

ໃນປີ 2014 ສຄຄຊ ໄດ້ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດແນວທາງນະໂຍບາຍການຕ່າງປະເທດຂອງ ພັກ ແລະ ລັດ. ໂດຍໄດ້ມີການເສີມຂະຫຍາຍການພົວພັນຮ່ວມມືກັບສາກົນ ພາຍໃຕ້ຮູບການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ເປັນຕົ້ນແມ່ນການຮ່ວມມືກັບ ຄຄຊ ສສ. ຫວຽດນາມ, ສປ. ຈີນ, ໄທ ແລະ ກະຊວງຍຸຕິທຳ ສ.ເກົາຫຼີ. ບົນພື້ນຖານການຮ່ວມມືດັ່ງກ່າວ ໄດ້ມີການຈັດກອງປະຊຸມປະຈຳປີສອງຝ່າຍ, ກອງປະຊຸມໃຫ້ແກ່ການນຳຂັ້ນສູງ, ພະນັກງານ ສຄຄຊ ແລະ ພາກສ່ວນຕ່າງໆທີ່ມີສ່ວນກ່ຽວຂ້ອງໃນຂົງເຂດຕະຫຼາດທຶນ, ນອກນັ້ນ ຍັງໄດ້ສົ່ງພະນັກງານ ສຄຄຊ ໄປຝຶກວຽກຕົວຈິງ ເພື່ອຖອດຖອນບົດຮຽນ ແລະ ແລກປ່ຽນປະສົບການກ່ຽວກັບການຄຸ້ມຄອງວຽກງານຫຼັກຊັບເຊິ່ງກັນ ແລະ ກັນ.

ສຄຄຊ ໄດ້ລົງນາມບົດບັນທຶກຄວາມເຂົ້າໃຈການຮ່ວມມືຫຼາຍຝ່າຍຂອງ ຄຄຊ 5 ປະເທດເຂດອ່າງແມ່ນ້ຳຂອງ (MMOU) ແລະ ເຂົ້າຮ່ວມກອງປະຊຸມອາຊຽນຕ່າງໆ ທີ່ຕິດພັນກັບວຽກງານຕະຫຼາດທຶນ ແລະ ການເຊື່ອມໂຍງຕະຫຼາດທຶນອາຊຽນ ເພື່ອເກັບກຳສະພາບ ແລະ ນຳມາຜັນຂະຫຍາຍເຂົ້າໃນການປະຕິບັດວຽກງານ ໃຫ້ສອດຄ່ອງກັບຫຼັກການສາກົນ ແລະ ແທດເໝາະກັບສະພາບຕົວຈິງຂອງ ສປປ ລາວ, ເປັນຕົ້ນແມ່ນ ກອງປະຊຸມກ່ຽວກັບໂຄງການພັດທະນາຕະຫຼາດທຶນອາຊຽນ (ACMF ແລະ WC-CMD), ໂຄງການພັດທະນາຕະຫຼາດພັນທະບັດອາຊຽນ (ABMF) ແລະ ອື່ນໆ. ສຄຄຊ ໄດ້ສືບຕໍ່ສຶກສາຄົ້ນຄວ້າ ແລະ ກະກຽມຄວາມພ້ອມຂອງ ສປປ ລາວ ໃນການເຂົ້າເປັນສະມາຊິກສົມບູນຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO) ທີ່ເປັນໜຶ່ງໃນເງື່ອນໄຂເບື້ອງຕົ້ນເພື່ອນາຕະຫຼາດທຶນ ສປປ ລາວ ກ້າວໄປສູ່ການເຊື່ອມໂຍງເຂົ້າເປັນປະຊາຄົມເສດຖະກິດອາຊຽນ ຫຼື AEC ໃນປີ 2015.

ນອກນັ້ນ, ໃນປີ 2014 ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ ກໍ່ຄືການສ້າງນິຕິກຳ ແລະ ການກໍ່ການສ້າງບຸກຄະລາກອນໄລຍະສັ້ນ ສຄຄຊ ຍັງໄດ້ສືບຕໍ່ພົວພັນຮ່ວມມືກັບອົງການຈັດຕັ້ງສາກົນຕ່າງໆ ເຊັ່ນ: ອົງການການເງິນສາກົນ (IFC), ທະນາຄານພັດທະນາອາຊີ (ADB), ທະນາຄານໂລກ (WB) ແລະ ອື່ນໆ.

## IV. ທິດທາງແຜນການປີ 2015

ເພື່ອເລີ່ມຕົ້ນຈັດຕັ້ງຜັນຂະຫຍາຍ ແຜນຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ ແຕ່ປີ 2016-2025 ໂດຍສະເພາະແມ່ນວິໄສທັດຮອດປີ 2030 ທີ່ໄດ້ກຳນົດໄວ້ວ່າ: “ສ້າງຕະຫຼາດທຶນໃຫ້ເປັນຂໍກະແຈ ໃນການຈັດສັນແຫຼ່ງທຶນ ທີ່ມີຄວາມໜ້າເຊື່ອຖື ແລະ ມີມາດຕະຖານສາກົນ” ໃຫ້ເປັນຈິງ ແນໃສ່ປະຕິບັດວຽກງານຄຸ້ມຄອງຫຼັກຊັບໃຫ້ມີປະສິດທິພາບ, ຍຸຕິທຳ ແລະ ໂປ່ງໃສ, ສຄຄຊ ຈະໄດ້ສືບຕໍ່ ສ້າງ ແລະ ປັບປຸງ ບັນດານິຕິກຳທີ່ຈຳເປັນຕໍ່ການເຄື່ອນໄຫວວຽກງານຫຼັກຊັບ ໃຫ້ມີປະສິດທິພາບ ແລະ ໄດ້ມາດຕະຖານສາກົນ, ສຶກສາຄົ້ນຄວ້າກົນໄກແກ້ໄຂຂໍ້ຂັດແຍ່ງ ແລະ ການດຳເນີນຄະດີຫຼັກຊັບ, ສືບຕໍ່ຄົ້ນຄວ້າ ແລະ ຕິດຕາມການຈັດຕັ້ງປະຕິບັດການນຳໃຊ້ມາດຕະຖານສາກົນ ດ້ານການລາຍງານການເງິນ (IFRS) ຂອງບໍລິສັດຈົດທະບຽນ; ຄົ້ນຄວ້າສ້າງບົດແນະນຳກ່ຽວກັບການຄຸ້ມຄອງບໍລິຫານກິດຈະການຂອງບໍລິສັດຈົດທະບຽນ ເພື່ອປູພື້ນຖານໃຫ້ແກ່ການນຳໃຊ້ (ASEAN Corporate Governance Scorecard) ໃນຕໍ່ໜ້າ ສ້າງບັນຊີລາຍຊື່ເປົ້າໝາຍບໍລິສັດ (ບໍລິສັດລັດ ແລະ ເອກະຊົນ) ທີ່ມີເງື່ອນໄຂອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ; ສຶກສາຄົ້ນຄວ້າວິທີການຄຸ້ມຄອງບໍລິສັດຫຼັກຊັບ ແບບຕີລາຄາຄວາມສ່ຽງໃນແຕ່ລະໄລຍະ (Risk-Base Supervision); ສືບຕໍ່ຈັດກອງປະຊຸມສຳມະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຫຼັກຊັບໃຫ້ແກ່ບັນດາສະຖາບັນການສຶກສາ, ອົງການຈັດຕັ້ງພາກລັດ, ເອກະຊົນ ແລະ ປະຊາຊົນທົ່ວໄປ, ພ້ອມທັງ ສືບຕໍ່ສ້າງລາຍການໂທລະພາບກ່ຽວກັບວຽກງານຫຼັກຊັບ ແລະ ໂຄສະນາເຜີຍແຜ່ວຽກງານຫຼັກຊັບຜ່ານສື່ສິ່ງພິມ ແລະ ສື່ມວນຊົນຕ່າງໆໃຫ້ກວ້າງຂວາງ; ສືບຕໍ່ຊອກຫາຊ່ອງທາງເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ ຈາກ ຄຄຊ ຂອງ ສສ. ຫວຽດນາມ, ສປ.ຈີນ, ສ.ເກົາຫຼີ, ໄທ ແລະ ອົງການຈັດຕັ້ງສາກົນອື່ນໆ; ສືບຕໍ່ຄົ້ນຄວ້າ ແລະ ສົມທົບກັບອົງການຈັດຕັ້ງສາກົນ ເພື່ອກະກຽມຄວາມພ້ອມໃນການເຂົ້າເປັນສະມາຊິກສົມບູນຂອງອົງການອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO); ກະກຽມຄວາມພ້ອມການເປັນເຈົ້າພາບຈັດກອງປະຊຸມການຮ່ວມມືດ້ານຕະຫຼາດທຶນຂອງ ຄຄຊ 5 ປະເທດເຂດອ່າງແມ່ນ້ຳຂອງ (MCMC) ຄັ້ງທີ V.

ເວົ້າລວມແລ້ວ ວຽກງານຕະຫຼາດທຶນເປັນວຽກງານທີ່ມີການພັດທະນາ ແລະ ປ່ຽນແປງໄວ, ສະນັ້ນ ເພື່ອບັນລຸໄດ້ຕາມເປົ້າໝາຍ ໃນປີ 2015 ທີ່ກຳນົດໄວ້ ສຄຄຊ ຈະຕ້ອງໄດ້ເອົາໃຈໃສ່ບຸກທະລຸທາງດ້ານຈິນຕະນາການ ແລະ ການສ້າງບຸກຄະລາກອນ. ດັ່ງນັ້ນ ສຄຄຊ ຍັງຈະຕ້ອງໄດ້ສືບຕໍ່ປັບປຸງກົງຈັກການຈັດຕັ້ງໃຫ້ຄົບຊຸດ ແລະ ເອົາໃຈໃສ່ການກໍ່ສ້າງພະນັກງານໃຫ້ມີຄວາມຮູ້-ຄວາມສາມາດຮັບໃຊ້ໄດ້ວຽກງານການພັດທະນາຕະຫຼາດທຶນ ຂອງ ສປປ ລາວ ໃຫ້ສາມາດເຊື່ອມໂຍງກັບຕະຫຼາດທຶນສາກົນ.

ເອກະສານຊ້ອນທ້າຍ 1: ປີ 2014 ນິຕິກຳທັງໝົດຂອງ ສຄຄຊ ປະກອບມີ:

1) “ກົດໝາຍວ່າດ້ວຍຫຼັກຊັບ” ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
2) “ຂໍ້ຕົກລົງວ່າດ້ວຍລະບຽບການອອກ ແລະ ສະເໜີຂາຍຮຸ້ນຕໍ່ມວນຊົນ” ສະບັບເລກທີ 008/ຄລຕ, ລົງວັນທີ 21 ກໍລະກົດ 2010;
3) “ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຕະຫຼາດຫຼັກຊັບ” ສະບັບເລກທີ 012/ຄລຕ, ລົງວັນທີ 10 ພະຈິກ 2010;
4) “ຂໍ້ຕົກລົງວ່າດ້ວຍລະບຽບການບັນຊີ ແລະ ການກວດສອບກ່ຽວກັບວຽກງານຫຼັກຊັບ” ສະບັບເລກທີ 013/ຄລຕ, ລົງວັນທີ 10 ພະຈິກ 2010;
5) “ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດໃນຕະຫຼາດຫຼັກຊັບ ຢູ່ ສປປ ລາວ'' ສະບັບເລກທີ 012/ຄລຕ, ລົງວັນທີ 19 ພຶດສະພາ 2011;
6) “ຂໍ້ຕົກລົງວ່າດ້ວຍລະບຽບການເປີດເຜີຍຂໍ້ມູນ” ສະບັບເລກທີ 014/ຄລຕ, ລົງວັນທີ 19 ພຶດສະພາ 2011;
7) “ແຈ້ງການກ່ຽວກັບການສ້າງ, ພັດທະນາ ແລະ ນຳໃຊ້ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ຂອງບໍລິສັດຫຼັກຊັບ” ສະບັບເລກທີ 371/ສຄລຕ, ລົງວັນທີ 24 ກຸມພາ 2012;
8) “ລະບຽບວ່າດ້ວຍການລາຍງານ” ສະບັບເລກທີ 373/ສຄລຕ, ລົງວັນທີ 24 ກຸມພາ 2012;
9) “ຄູ່ມືກ່ຽວກັບການຂໍອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ” ສະບັບເລກທີ 482/ສຄລຕ, ລົງວັນທີ 27 ກຸມພາ 2012;
10) “ລະບຽບວ່າດ້ວຍການຄຸ້ມຄອງການຊື້-ຂາຍຮຸ້ນທາງອິນເຕີເນັດ ຢູ່ ສປປ ລາວ” ສະບັບເລກທີ 001/ ຄຄຊ, ລົງວັນທີ 24 ກໍລະກົດ 2013;
11) “ລະບຽບວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ” ສະບັບເລກທີ 002/ຄຄຊ, ລົງວັນທີ 24 ກໍລະກົດ 2013;
12) “ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ” ສະບັບເລກທີ 188/ນຍ, ລົງວັນທີ 24 ກໍລະກົດ 2013;
13) “ລະບຽບວ່າດ້ວຍການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ” ສະບັບເລກທີ 006/ຄຄຊ, ລົງວັນທີ 20 ກັນຍາ 2013;
14) “ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ” ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013;
15) “ແຈ້ງການຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ເລື່ອງການລະດົມທຶນໂດຍການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນຢູ່ຕ່າງປະເທດ” ສະບັບເລກທີ 001/ຄຄຊ, ລົງວັນທີ 14 ກຸມພາ 2014;
16) “ລະບຽບວ່າດ້ວຍການກວດກາວຽກງານຫຼັກຊັບ” ສະບັບເລກທີ 002/ຄຄຊ, ລົງວັນທີ 18 ກຸມພາ 2014;
17) “ລະບຽບວ່າດ້ວຍຄວາມພຽງພໍຂອງທຶນຂອງບໍລິສັດຫຼັກຊັບ” ສະບັບເລກທີ 003/ຄຄຊ, ລົງວັນທີ 18 ກຸມພາ 2014;

18)“ລະບຽບວ່າດ້ວຍການຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ”  ສະບັບເລກທີ 004/ຄຄຊ, ລົງວັນທີ 18 ກຸມພາ 2014;

19)“ບົດແນະນຳວ່າດ້ວຍການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ” ສະບັບເລກທີ 257/ສຄຄຊ, ລົງວັນທີ 3 ມີນາ 2014;

20)“ບົດແນະນຳວ່າດ້ວຍ ການຈັດຕັ້ງປະຕິບັດລະບຽບວ່າດ້ວຍ ຄວາມ ພຽງພໍຂອງທຶນຂອງບໍລິສັດຫຼັກຊັບ” ສະບັບເລກທີ 281/ສຄຄຊ, ລົງວັນທີ 6 ມີນາ 2014;

21)“ລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ”  ສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ 2014;

22)“ລະບຽບວ່າດ້ວຍທະນາຄານດູແລຊັບສິນ” ສະບັບເລກທີ 010/ຄຄຊ, ລົງວັນທີ 7 ພຶດສະພາ 2014;

23)“ຂໍ້ຕົກລົງວ່າດ້ວຍຄ່າທຳນຽມສຳລັບການອອກຈຳໜ່າຍຮຸ້ນກູ້ຢູ່ ຕ່າງປະເທດ”  ສະບັບເລກທີ 011/ຄຄຊ, ລົງວັນທີ 7 ພຶດສະພາ 2014;

24)“ລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນກູ້” ສະບັບເລກທີ 019/ຄຄຊ, ລົງວັນທີ 22 ທັນວາ 2014.

## ເອກະສານຊ້ອນທ້າຍ 2: ບໍລິສັດຫຼັກຊັບໃນ ສປປ ລາວ

| ລ/ດ | ຊື່ | ວັນສ້າງຕັ້ງ | ໂຄງສ້າງການຖືຮຸ້ນ | ຈໍານວນ ໜ່ວຍບໍລິການ | ຂອບເຂດການເຄື່ອນໄຫວ |
|---|---|---|---|---|---|
| 1 | ບໍລິສັດຫຼັກຊັບ ລ້ານຊ້າງມະຫາຊົນ | 01 ທັນວາ 2010 | ທະນາຄານພັດທະນາລາວ 100% | - | ເຕັມຮູບແບບ: ທີ່ປຶກສາດ້ານການເງິນ, ເປັນນາຍໜ້າຊື້-ຂາຍຫຼັກຊັບ ແລະ ຄໍ້າປະກັນການຈໍາໜ່າຍຫຼັກຊັບ |
| 2 | ບໍລິສັດຫຼັກຊັບ ທຄຕລ-ກທ ຈໍາກັດ | 20 ທັນວາ 2010 | - ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 70%<br>- ບໍລິສັດຫຼັກຊັບ ເຄທີຊີມິໂກ (ປະເທດ ໄທ) 30% | 2 | ເຕັມຮູບແບບ: ທີ່ປຶກສາດ້ານການເງິນ, ເປັນນາຍໜ້າຊື້-ຂາຍຫຼັກຊັບ ແລະ ຄໍ້າປະກັນການຈໍາໜ່າຍຫຼັກຊັບ |
| 3 | ບໍລິສັດຫຼັກຊັບ ລາວ-ຈີນ ຈໍາກັດ | 16 ພະຈິກ 2013 | - ທະນາຄານສົ່ງເສີມກະສິກໍາ 41%<br>- ບໍລິສັດຫຼັກຊັບ ປາຊີຟິກຮຸ້ນສ່ວນ ຈໍາກັດ (ສປ ຈີນ) 39%<br>- ບໍລິສັດ ອຸດສາຫະກໍາຂໍ້ມູນຂ່າວສານລາວ ຈໍາກັດ 20% | - | ເຕັມຮູບແບບ: ທີ່ປຶກສາດ້ານການເງິນ, ເປັນນາຍໜ້າຊື້-ຂາຍຫຼັກຊັບ ແລະ ຄໍ້າປະກັນການຈໍາໜ່າຍຫຼັກຊັບ |
| 4 | ບໍລິສັດ ເອພີເອມ ລາວ ຈໍາກັດ | 16 ພະຈິກ 2013 | - ບໍລິສັດຫຼັກຊັບ Asset Pro Management Co., Ltd (ປະເທດໄທ) 60%<br>- ບຸກຄົນຕ່າງປະເທດ (ໄທ) 20%<br>- ບຸກຄົນພາຍໃນປະເທດ 20% | - | ເປັນທີ່ປຶກສາທາງດ້ານການເງິນ |